ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຊີ້ນຳລວມ

ອຳນວຍຄວາມສະດວກທາງການຄ້າຂັ້ນສູນກາງ

ເລກທີ 002/ຄອຄສ

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2021

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງຄຳແນະນຳການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ຂອງບັນດາຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018.
- ອີງຕາມ ໜັງສືອະນຸມັດນຳໃຊ້ທຶນສະໜັບສະໜູນໂຄງການຍ່ອຍ (Challenge Facility: CF) ຂອງໂຄງການ LCT ເພື່ອຈັດຕັ້ງປະຕິບັດໂຄງການທີ່ສະເໜີໂດຍ ກົມພາສີ, ກົມອາຫານ ແລະ ຢາ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ.
- ອີງຕາມ ການເຫັນດີ ຂອງກົມພາສີ, ກົມອາຫານ ແລະ ຢາ, ກົມປູກຝັງ ແລະ ກົມລ້ຽງສັດ ແລະ ການປະມົງ ກ່ຽວກັບຄຳແນະນຳການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ຂອງບັນດາຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ,**

**ຮອງຫົວໜ້າ ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ (ຄອຄສ) ອອກຂໍ້ຕົກລົງ:**

**ມາດຕາ 1 ການຮັບຮອງ**

ຮັບຮອງ ຄຳແນະນຳການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ຂອງບັນດາຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ.

**ມາດຕາ 2 ໜ້າທີ່ ແລະ ຄວາມຮັບຜິດຊອບ**

ໃຫ້ບັນດາຂະແໜງການທີ່ຖືກກຳນົດຢູ່ໃນຄຳແນະນຳສະບັບນີ້ ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງຕັ້ງໜ່ວຍງານບໍລິຫານຄວາມສ່ຽງ (Risk Management Unit: RMU) ຂອງຕົນຂຶ້ນ.
2. ສ້າງຕັ້ງຄະນະກຳມະການບໍລິຫານຄວາມສ່ຽງຮ່ວມກັນ (Joint Risk Management Committee: JRMC) ທີ່ປະກອບມີບັນດາໜ່ວຍງານບໍລິຫານຄວາມສ່ຽງ ຂອງແຕ່ລະກົມ ແລະ ໜ່ວຍງານທີ່ກ່ຽວຂ້ອງປະຈຳດ່ານ ເປັນຄະນະ.
3. ສ້າງຄູ່ມືແນະນຳໃນການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ໃຫ້ແກ່ໜ່ວຍງານຂອງຕົນທີ່ປະຈຳຢູ່ດ່ານ ຢ່າງລະອຽດ ເປັນຕົ້ນ ມາດຕະຖານການດຳເນີນງານ (Standard Operating Procedure: SOP).
4. ເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັນ (MOU) ຢ່າງເປັນທາງການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ແລະ ການກວດສອບຄືນພາຍຫຼັງການນຳເຂົ້າ.

ລາຍລະອຽດ ໄດ້ກຳນົດຢູ່ໃນຄຳແນະນຳການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ຂອງບັນດາຂະແໜງການທີ່ມີໜ່ວຍງານປະຈຳຢູ່ດ່ານ.

**ມາດຕາ 3 ການລາຍງານ**

ໃຫ້ບັນດາຂະແໜງການທີ່ຖືກກຳນົດຢູ່ໃນຄຳແນະນຳສະບັບນີ້ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ມາຍັງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມຫ້ອງການກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ເປັນແຕ່ລະເດືອນ ເພື່ອສັງລວມລາຍງານຕໍ່ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ໃຫ້ບັນດາຂະແໜງການທີ່ຖືກກຳນົດຢູ່ໃນຄຳແນະນຳສະບັບນີ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 5 ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ

ຮອງຫົວໜ້າ ຄອຄສ, ຜູ້ປະຈຳການ

ຫົວໜ້າ

ນ. ເຂັມມະນີ ພົນເສນາ